**Saint Thomas Health**

**Saint Thomas DeKalb Hospital, LLC, dba Ascension Saint Thomas DeKalb; Saint Thomas Hickman Hospital, dba Ascension Saint Thomas Hickman; Saint Thomas Highlands Hospital, LLC, dba Ascension Saint Thomas Highlands; Saint Thomas River Park Hospital, LLC, dba Ascension Saint Thomas River Park; Saint Thomas Rutherford Hospital, dba Ascension Saint Thomas Rutherford; Saint Thomas Midtown Hospital; Saint Thomas Stones River Hospital, LLC, dba Ascension Saint Thomas Stones River; Saint Thomas West, dba Ascension Saint Thomas Hospital, Ascension Saint Thomas Midtown, Ascension Saint Thomas West, Ascension Saint Thomas Three Rivers**

# ສັງລວມນະໂຍບາຍການຊ່ວຍເຫຼືອດ້ານການເງິນ

15 ມີນາ 2022

Saint Thomas Health dba Ascension Saint Thomas, ລວມທັງບັນດາກະຊວງສາທາລະນະສຸກທີ່ລະບຸ ໄວ້ຂ້າງເທິງ, ມີຄວາມມຸ້ງໝັ້ນ ແລະ ເຄົາລົບກຽດສັກສີຂອງແຕ່ລະຄົນ ໂດຍມີຄວາມກັງວົນເປັນພິເສດຕໍ່ຜູ້ທີ່ຕໍ່ສູ້ກັບອຸ ປະສັກໃນການເຂົ້າເຖິງການບໍລິການດ້ານສຸຂະພາບ. Ascension Saint Thomas ມີຄວາມມຸ້ງໝັ້ນທີ່ເທົ່າທຽມ ກັນໃນການຄຸ້ມຄອງຊັບພະຍາກອນດ້ານສຸຂະພາບຂອງຕົນໃຫ້ເປັນການບໍລິການໃຫ້ແກ່ຊຸມຊົນທັງໝົດ. ໂດຍອີງໃສ່ຫຼັກ ການເຫຼົ່ານີ້, Ascension Saint Thomas ສະໜອງການຊ່ວຍເຫຼືອດ້ານການເງິນສໍາລັບບາງຄົນທີ່ໄດ້ຮັບການດູແລ ສຸກເສີນຫຼື ການດູແລທີ່ຈໍາເປັນທາງການແພດອື່ນໆຈາກ Ascension Saint Thomas. ບົດສັງລວມນີ້ໄດ້ສະຫຼຸບ ໂດຍຫຍໍ້ກ່ຽວກັບນະໂຍບາຍການຊ່ວຍເຫຼືອດ້ານການເງິນຂອງ Ascension Saint Thomas.

## ໃຜມີສິດໄດ້ຮັບ?

ທ່ານອາດຈະໄດ້ຮັບການຊ່ວຍເຫຼືອດ້ານການເງິນຖ້າທ່ານອາໃສຢູ່ໃນເຂດປົກຄອງດັ່ງຕໍ່ໄປນີ້: Cannon, Davidson, Dekalb, Hickman, Rutherford, Warren, White, Montgomery, Putnam, Sumner, Williamson, Wilson ແລະ Humphrey. ໂດຍທົ່ວໄປແລ້ວການຊ່ວຍເຫຼືອທາງດ້ານການເງິນແມ່ນໄດ້ກໍານົດໂດຍ ລາຍຮັບຄົວເຮືອນທັງຫມົດຂອງທ່ານ ເມື່ອທຽບກັບລະດັບຄວາມທຸກຍາກຂອງລັດຖະບານກາງ. ຖ້າລາຍໄດ້ຂອງທ່ານ ຕໍ່າກ່ວາ ຫຼື ເທົ່າກັບ 250[1]%

ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບການດູແລຈາກ ການກຸສົນ 100% ໃນສ່ວນຂອງຄ່າບໍລິການທີ່ທ່ານຮັບຜິດຊອບ. ຖ້າລາຍໄດ້ຂອງທ່ານສູງກວ່າ 250[13]% ຂອງ ລະດັບຄວາມທຸກຍາກຂອງລັດຖະບານກາງແຕ່ບໍ່ເກີນ 400[2]% ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບອັດຕາສ່ວນຫຼຸດທີ່ປັບຕາມລະດັບ. ຖ້າທ່ານມີໜີ້ສິນທາງການແພດສຳລັບການດູແລສຸກເສີນ ແລະ ຄວາມຈຳເປັນທາງການແພດທີ່ເກີນຈຳນວນລາຍໄດ້ຂອງທ່ານ, ທ່ານອາດຈະມີສິດໄດ້ຮັບສ່ວນຫຼຸດ. ຖ້າທ່ານມີຊັບສິນ ເກີນ 250% ຂອງຈຳນວນລາຍໄດ້ຈາກລະດັບຄວາມທຸກຍາກຂອງລັດຖະບານກາງຂອງທ່ານ ທ່ານອາດຈະບໍ່ມີເງື່ອນ ໄຂໄດ້ຮັບການຊ່ວຍເຫຼືອດ້ານການເງິນ. [ທ່ານອາດຈະຕ້ອງຈ່າຍຄ່າບໍລິການຄົງທີ່ເລັກນ້ອຍ.][3] ຄົນເຈັບທີ່ມີສິດໄດ້ຮັບ ການຊ່ວຍເຫຼືອທາງດ້ານການເງິນຈະບໍ່ຖືກເກັບຄ່າເພີ່ມສຳລັບການເບິ່ງແຍງດູແລທີ່ມີສິດໄດ້ຮັບຫຼາຍກ່ວາຈຳນວນທີ່ໄດ້ ສົ່ງບິນເກັບເງິນໂດຍທົ່ວໄປກັບຄົນເຈັບທີ່ມີປະກັນໄພຄຸ້ມຄອງ.

## ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນຳໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ ການເບິ່ງແຍງດູແລທີ່ຈຳເປັນ ທາງການແພດອື່ນໆ. ຂໍ້ກຳນົດເຫຼົ່ານີ້ແມ່ນໄດ້ລະບຸໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ. ການດູແລ ອື່ນໆທັງໝົດບໍ່ໄດ້ຖືກຄຸ້ມຄອງໂດຍນະໂຍບາຍການຊ່ວຍເຫຼືອດ້ານການເງິນ.

## ຂ້າພະເຈົ້າສາມາດຂໍສະໝັກໄດ້ແນວໃດ?

ເພື່ອສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ, ປົກກະຕິທ່ານ ຈະຕ້ອງຂຽນໃບຄຳຮ້ອງສະໝັກຂໍ ເປັນລາຍລັກອັກ ສອນ ແລະ ປະກອບເອກະສານສະໜັບສະໜູນໃຫ້ຕາມທີ່ລະບຸໄວ້ໃນນະໂຍບາຍການ ຊ່ວຍເຫຼືອທາງ ດ້ານການເງິນ ແລະ ການໃຊ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.[4]

## ຂ້າພະເຈົ້າສາມາດຮັບການຊ່ວຍເຫຼືອກັບການຂໍສະໝັກໄດ້ແນວໃດ?

ສຳລັບການຊ່ວຍເຫຼືອກັບການໃຊ້ນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ທ່ານອາດຈະຕິດຕໍ່ຫາສະມາຊິກທີມງານ ຊ່ວຍເຫຼືອດ້ານການເງິນໄດ້ທີ່ເບີໂທໃດໜຶ່ງຢູ່ລຸ່ມນີ້ຕາມສະຖານທີ່ບໍລິການສະເພາະ.

## ຂ້າພະເຈົ້າສາມາດໄດ້ຮັບຂໍ້ມູນເພີ່ມເຕີມໄດ້ແນວໃດ?

ສຳເນົາຂອງນະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນແມ່ນມີຢູ່ ທີ່

[https://healthcare.ascension.org/Financial-Assistance/Tennessee] ແລະ ຕິດຕໍ່ພົວພັນສະເພາະຂ້າງ ລຸ່ມນີ້. ສຳເນົານະໂຍບາຍການຊ່ວຍເຫຼືອດ້ານການເງິນ ແລະ ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການເງິນໂດຍບໍ່ ເສຍຄ່າກໍ່ສາມາດໄດ້ຮັບທາງໄປສະນີໂດຍການຂຽນເຖິງ: Ascension Saint Thomas Financial Assistance Department, P O. Box 380 Nashville, TN 37202. ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍ ການຊ່ວຍເຫຼືອດ້ານການເງິນຍັງມີໃຫ້ໂດຍສະຖານທີ່ທີ່ຕິດຕໍ່ສະເພາະຂ້າງລຸ່ມນີ້

**<u>ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?</u>**

ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງດ້ານການ ເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ທີມງານຊ່ວຍ ເຫຼືອດ້ານການເງິນຂອງພວກເຮົາໄດ້ທີ່ເບີໂທໃດໜຶ່ງຢູ່ລຸ່ມນີ້ຕາມສະຖານທີ່ບໍລິການສະເພາະ.

**<u>ຂໍ້ມູນຕິດຕໍ່ການຊ່ວຍເຫຼືອດ້ານການເງິນ</u>**

| | |
|---|---|
| Ascension Saint Thomas Midtown Hospital | 615-284-5340 |
| Ascension Saint Thomas Rutherford Hospital | 615-222-6638 |
| Ascension Saint Thomas West Hospital | 615-222-6638 |
| Ascension Saint Thomas Dekalb Hospital | 877-348-7082 |
| Ascension Saint Thomas Stones River Hospital | 877-348-7082 |
| Ascension Saint Thomas Highlands Hospital | 877-348-7082 |
| Ascension Saint Thomas River Park Hospital | 877-348-7082 |
| Ascension Saint Thomas Three Rivers | 931-296-0251 |
| Saint Thomas Hickman Hospital | 931-729-6800 |
| Saint Thomas Hospital for Specialty Surgery | 615-341-7480 |

| | |
|---|---|
| Ascension Medical Group | 844-686-2555 |
| Saint Thomas Emergency Medical Services | 877-664-4076 |
| Saint Thomas LabPlus | 615-284-2773 |
| Saint Thomas Center for Sleep | 615-284-7537 |
| Baptist Ambulatory Surgery Center | 615-321-7730 |

**ການແປເອກະສານ ກ່ຽວກັບ ນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ໃບສະໝັກນະໂຍບາຍການຊ່ວຍເຫຼືອດ້ານການ ເງິນ ແລະ ບົດແນະນຳ ແລະ ບົດສະຫຼຸບພາສາທຳມະດານີ້ແມ່ນມີໃຫ້ເປັນພາສາຕໍ່ໄປນີ້ໃນເວັບໄຊທ໌ຂອງພວກເຮົາ ແລະ ຕາມການຮ້ອງຂໍ:**

ພາສາອາຣັບ
ພາສາເກົາຫຼີ
ພາສາລາວ
ພາສາຈີນແບບຫຍໍ້
ພາສາສະເປນ
ພາສາຈີນດັ້ງເດີມ
ພາສາຫວຽດນາມ